# ບົ້ງນ້ອຍຊອກຫາເກີບ



ຂຽນໂດຍ: ສົມສະໜຸກ ບຸດຕະວົງ
ແຕ້ມໂດຍ: ອຸ່ນຫຼ້າ ສັນຕິ



ເກີບບົ້ງນ້ອຍເສຍ ລາວຍ່າງ
ບໍ່ໄດ້ຖ້າເກີບຂອງລາວບໍ່ຄົບ.



LA-LLP-15-0005_Text_DesignFiles.indd 1 6/26/23 3:54 PM



ບົ້ງໄປຂໍຢືມເກີບນຳແມງມຸມ ເກີບຂອງ
ແມງມຸມນ້ອຍໂພດ ມັນເອົາໄວ້ທາວໄຍ.



LA-LLP-15-0005_Text_DesignFiles.indd 2 6/26/23 3:54 PM



ບົ້ງນ້ອຍເສົ້າໃຈເພາະລາວ
ບໍ່ມີເກີບຄົບຕີນຂອງລາວ.



LA-LLP-15-0005_Text_DesignFiles.indd 3
6/26/23 3:54 PM



ບົ້ງນ້ອຍໄປຂໍຢືມເກີບນຳກົບ



LA-LLP-15-0005_Text_DesignFiles.indd 4 6/26/23 3:54 PM

ກົບກໍໃຫ້ຢືມແຕ່ບັ້ງນ້ອຍ
ໃສ່ບໍ່ໄດ້.





LA-LLP-15-0005_Text_DesignFiles.indd 5 6/26/23 3:54 PM



ບົ້ງນ້ອຍຈຶ່ງຂໍຢືມເກີບ
ນຳຕັກກະແຕນ.



LA-LLP-15-0005_Text_DesignFiles.indd 6 6/26/23 3:54 PM



ບົ້ງນ້ອຍໄດ້ເກີບຕັກກະແຕນມາ
ໃສ່ຕີນແຕ່ໃສ່ເກີບແລ້ວກໍຍ່າງຍາກ.



LA-LLP-15-0005_Text_DesignFiles.indd 7 6/26/23 3:54 PM



ບົ້ງນ້ອຍໄປຂໍຢືມເກີບນຳກະປູ



LA-LLP-15-0005_Text_DesignFiles.indd 8
6/26/23 3:54 PM



ບົ້ງນ້ອຍກໍໃສ່ເກີບກະປູບໍ່ໄດ້ເພາະມັນ
ແຫຼມໂພດກະປູໃຊ້ເກີບເພື່ອຂຸດຮູ.



LA-LLP-15-0005_Text_DesignFiles.indd 9 6/26/23 3:54 PM



ບົ້ງນ້ອຍຊອກຫາເກີບຫຼາຍ
ວັນກະຍັງບໍ່ໄດ້ເກີບ.



ບົ້ງນ້ອຍຫາວໄຍແລ້ວ
ນອນພັກຜ່ອນ
ຢູ່ໃນປົ໊ຂອງລາວ.



LA-LLP-15-0005_Text_DesignFiles.indd 11 6/26/23 3:54 PM



ຫຼາຍວັນຜ່ານໄປບົ້ງນ້ອຍ
ກໍເລີມແຕກອອກຈາກປົ້.



LA-LLP-15-0005_Text_DesignFiles.indd 12
6/26/23 3:54 PM

ປີກຂອງບົ້ງນ້ອຍປົ່ງອອກເປັນສີສວຍງາມ
ບົ້ງນ້ອຍບໍ່ຕ້ອງການເກີບອີກແລ້ວ.





LA-LLP-15-0005_Text_DesignFiles.indd 13 6/26/23 3:54 PM

# ຄຳຖາມ

1. ບົດເລື່ອງນີ້ເວົ້າເລື່ອງຫຍັງ?
2. ເກີດຫຍັງຂຶ້ນກັບບົ້ງນ້ອຍ?
3. ບົ້ງນ້ອຍໄປຂໍເກີບນຳໃຜແດ່?
4. ພວກເຂົາໄດ້ເອົາເກີບໃຫ້ບົ້ງນ້ອຍໃສ່ບໍ່?
5. ບົ້ງນ້ອຍໃສ່ເກີບຂອງພວກເຂົາໄດ້ບໍ່?
6. ສຸດທ້າຍບົ້ງໄດ້ເກີບມາໃສ່ບໍ່?
7. ແລ້ວບົ້ງນ້ອຍກາຍເປັນຫຍັງ?





LA-LLP-15-0005_Text_DesignFiles.indd 14 6/26/23 3:54 PM





LA-LLP-15-0005_Text_DesignFiles.indd 15 6/26/23 3:54 PM